**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ ເລກທີ 256/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 13 ພຶດສະພາ 2021

# ຂໍ້ຕົກລົງເພີ່ມເຕີມ

## ວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19)

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020;
- ອີງໃສ່ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໃນຮອບທີ 2 ເລີ່ມແຕ່ເດືອນ ເມສາ 2021 ເປັນຕົ້ນມາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍສິນເຊື່ອເພີ່ມເຕີມ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ໃຫ້ແກ່ລູກຄ້າເງິນກູ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ເປັນພະນັກງານ ຫຼື ລູກຈ້າງ ຂອງຫົວໜ່ວຍທຸລະກິດ ຫຼື ການຈັດຕັ້ງໃດໜຶ່ງ ທີ່ຕ້ອງໄດ້ຢຸດກິດຈະການທັງໝົດ ຫຼື ບາງສ່ວນ ລວມທັງແຮງງານອິດສະຫຼະທີ່ບໍ່ສາມາດສ້າງລາຍຮັບ ເນື່ອງຈາກໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ ພາໃຫ້ບໍ່ໄດ້ຮັບເງິນເດືອນ ຫຼື ໄດ້ຮັບເງິນເດືອນສ່ວນໃດໜຶ່ງ ຊຶ່ງບໍ່ສາມາດຊຳລະໜີ້ຂອງຕົນໃຫ້ແກ່ ທະນາຄານ ແລະ ສະຖາບັນການເງິນ ໄດ້ຕາມສັນຍາ.

**ມາດຕາ 2 ນະໂຍບາຍເພີ່ມເຕີມ ມາດຕາ 3 ຂອງ ຂໍ້ຕົກລົງ 238/ທຫລ, ລົງວັນທີ 26 ມີນາ 2020**

ນອກຈາກນະໂຍບາຍທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງ 238/ທຫລ, ລົງວັນທີ 26 ມີນາ 2020 ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນປະຕິບັດນະໂຍບາຍເພີ່ມເຕີມຕໍ່ລູກຄ້າຂອງຕົນດັ່ງນີ້:

- ໃຫ້ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍ່ຮັບເງິນຝາກ ເລື່ອນເວລາຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ລູກຄ້າເງິນກູ້ (ປະເພດເງິນກູ້ເພື່ອການຊົມໃຊ້) ເປັນເວລາ 3 ເດືອນ ນັບແຕ່ເດືອນພຶດສະພາ ຫາ ເດືອນກໍລະກົດ 2021 ຕາມເງື່ອນໄຂທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້;

- ໃຫ້ບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ເລື່ອນກຳນົດເວລາໃນການຈ່າຍຄ່າງວດໃນການເຊົ່າຊື້ ຫຼື ກຳນົດເວລາການໄຖ່ຖອນຊັບຊວດຈຳເປັນເວລາ 3 ເດືອນ ນັບແຕ່ເດືອນພຶດສະພາ ຫາ ເດືອນ ກໍລະກົດ 2021 ຕາມເງື່ອນໄຂທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ເງື່ອນໄຂໃນການພິຈາລະນາ**

ໃນການພິຈາລະນາ ເລື່ອນກຳນົດເວລາຊຳລະໜີ້ ມີດັ່ງນີ້:

- ລູກຄ້າທີ່ຈະໄດ້ຮັບນະໂຍບາຍເລື່ອນເວລາຊຳລະໜີ້ຕ້ອງແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ພາໃຫ້ບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ຫຼື ໄດ້ຮັບພຽງສ່ວນໃດໜຶ່ງພາໃຫ້ບໍ່ສາມາດຊຳລະໜີ້ ຫຼື ຄ່າງວດໄດ້ ໂດຍມີການຢັ້ງຢືນຈາກບ່ອນເຮັດວຽກດັ່ງກ່າວ;
- ສຳລັບລູກຄ້າທີ່ມີແຫຼ່ງລາຍຮັບຈາກການດຳເນີນທຸລະກິດ ທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19 ແມ່ນໃຫ້ພິຈາລະນາຕາມຖານະການເງິນ ແລະ ສະພາບຕົວຈິງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລະ ສັງລວມລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ແກ່ຄະນະຜູ້ວ່າການຊາບເປັນແຕ່ລະເດືອນ ຢ່າງເປັນປົກກະຕິ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງປະຕິບັດນະໂຍບາຍສິນເຊື່ອຕໍ່ລູກຄ້າເງິນກູ້ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້. ລູກຄ້າເງິນກູ້ ທີ່ມີເງື່ອນໄຂຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ສາມາດແຈ້ງຂໍຮັບນະໂຍບາຍສິນເຊື່ອຈາກທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ເປັນເຈົ້າໜີ້ຂອງຕົນ ໂດຍເຮັດໜັງສືສະເໜີຂໍນະໂຍບາຍເປັນລາຍລັກອັກສອນ ຫຼື ຜ່ານຊ່ອງທາງອື່ນຕາມການກຳນົດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ພ້ອມທັງ ປະກອບເອກະສານຢັ້ງຢືນກ່ຽວກັບການເລີກຈ້າງ, ການຢຸດເຊົາການຈ່າຍເງິນເດືອນຊົ່ວຄາວ ຫຼື ການຈ່າຍເງິນເດືອນບາງສ່ວນ ເພື່ອເປັນຂໍ້ມູນໃນການພິຈາລະນາປະຕິບັດນະໂຍບາຍ.

ຫ້າມທະນາຄານທຸລະກິດ ແລະ ສະຖາບັນການເງິນ ຍຶດຫຼັກຊັບຄ້ຳປະກັນ, ປັບໄໝ ແລະ ເກັບຄ່າທຳນຽມຕ່າງໆໃນການປະຕິບັດນະໂຍບາຍຕາມຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງແຈ້ງໃຫ້ລູກຄ້າຂອງຕົນຊາບຢ່າງທົ່ວເຖິງຜ່ານເວັບໄຊ້ ຫຼື ຊ່ອງທາງອື່ນທີ່ເໝາະສົມ ກ່ຽວກັບການປະຕິບັດນະໂຍບາຍຕາມຂໍ້ຕົກລົງສະບັບນີ້. ພ້ອມທັງເອົາໃຈໃສ່ໃນການຕິດຕາມກວດກາສິນເຊື່ອທີ່ໄດ້ຮັບນະໂຍບາຍດັ່ງກ່າວຢ່າງໃກ້ຊິດ ແລະ ລາຍງານມາຍັງກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ພາຍໃນວັນທີ 10 ຂອງແຕ່ລະເດືອນຕາມແບບຟອມທີ່ກຳນົດ.

ກໍລະນີລູກຄ້າຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບການປະຕິບັດນະໂຍບາຍສິນເຊື່ອຕາມທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຫຼື ຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງ

ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020 ສາມາດຕິດຕໍ່ມາຍັງ ກົມຄຸ້ມຄອງທະນາຄານທຸລະກິດ ເບີໂທຕິດຕໍ່ 021 219825 ແລະ ກົມຄຸ້ມຄອງສະຖາບັນການເງິນ ເບີໂທຕິດຕໍ່ 021 244355.

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ ປ ປ ລາວ
ຜູ້ວ່າການ

**ສອນໄຊ ສິດພະໄຊ**